ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 4524 /ກງ
ນະຄອນຫຼວງວຽງຈັນ, ວັນທີ 13 ທັນວາ 2024

# ຄຳແນະນຳ
## ວ່າດ້ວຍການປັບປຸງເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງການເງິນ (ສະບັບປັບປຸງ) ສະບັບເລກທີ 353/ນຍ, ລົງວັນທີ 2 ສິງຫາ 2024;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 2361/ຫສນຍ, ລົງວັນທີ 14 ພະຈິກ 2024;
- ອີງຕາມ ຄຳແນະນຳ ກ່ຽວກັບການຄິດໄລ່ເງິນເດືອນພື້ນຖານ ແລະເງິນອຸດໜູນຕ່າງໆ ຂອງພະນັກງານ ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ເສຍອົງຄະ ສະບັບເລກທີ 2924/ກງ, ລົງວັນທີ 19 ຕຸລາ 2012;
- ອີງຕາມ ການສະເໜີ ຂອງກົມງົບປະມານແຫ່ງລັດ ສະບັບເລກທີ 1038/ກງລ, ລົງວັນທີ 5 ທັນວາ 2024.

ເພື່ອປະຕິບັດຕາມນະໂຍບາຍຂອງລັດຖະບານ ໃນການເພີ່ມຄ່າຄອງຊີບ ແລະ ປັບປຸງເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ ໃຫ້ສອດຄ່ອງ ແລະ ໃກ້ຄຽງກັບປະຈຸບັນ.

**ກະຊວງການເງິນ ອອກຄຳແນະນຳ ໃນການຈັດຕັ້ງປະຕິບັດ ດັ່ງນີ້:**

1. ໃຫ້ສືບຕໍ່ຈັດຕັ້ງປະຕິບັດດັດສະນີ ແລະ ໂຄງສ້າງດັດສະນີ ຕາມທີ່ໄດ້ປະຕິບັດຜ່ານມາ ໃນມູນຄ່າ 7,350 ກີບ/ດັດສະນີ ທົ່ວລະບົບເງິນເດືອນຂອງລັດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ໃຫ້ປະຕິບັດນະໂຍບາຍຊ່ວຍໜູນສະເພາະ ພະນັກງານ-ລັດຖະກອນ, ພະນັກງານບຳນານ ແລະ ພະນັກງານເສຍອົງຄະ ທີ່ມີເງິນເດືອນພື້ນຖານຂັ້ນຕ່ຳຫຼຸດ 1,700,000 ກີບ, ກໍລະນີຕ່ຳກວ່າ 1,700,000 ກີບ ລັດຖະບານຊ່ວຍໜູນເພີ່ມ ຕາມຈຳນວນທີ່ບໍ່ພໍ;
3. ໃຫ້ຄິດໄລ່ ເພີ່ມເງິນອຸດໜູນຄ່າຄອງຊີບທີ່ເປັນຜົນປະໂຫຍດອື່ນຕື່ມ 150,000 ກີບ/ຄົນ/ເດືອນ (ເພີ່ມເປັນຄັ້ງທີ 3) ລວມກັບອຸດໜູນຄ່າຄອງຊີບສອງຄັ້ງທີ່ຜ່ານມາ ເປັນຈຳນວນ 450,000 ກີບ/ຄົນ/ເດືອນ ໃຫ້ພະນັກງານ-ລັດຖະກອນ (ພະນັກງານປະຈຳການ, ພະນັກງານເຂົ້າການໃໝ່ 95%, ພະນັກງານໄປຮຽນຕໍ່ພາຍໃນ-ຕ່າງປະເທດ ຕາມນະໂຍບາຍຂອງລັດຖະບານ), ຄູນິດຈະພັດ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ເສຍອົງຄະ ແລະ 5 ເປົ້າໝາຍທີ່ນອນໃນລະບົບປະກັນສັງຄົມພາກລັດ ຄື: ເສຍອົງຄະຮາກຖານ, ບຳນານຄືນ, ສະມາຊິກຄອບຄົວ, ຜູ້ດູແລຕາມກົດໝາຍ ແລະ ຜູ້ດູແລຜູ້ເສຍອົງຄະພິເສດ ປະຕິບັດເອກະພາບໃນຂອບເຂດທົ່ວປະເທດ;
4. ປັບປຸງ ເງິນອຸດໜູນ ຕຳແໜ່ງບໍລິຫານປະເພດຕ່າງໆ ແລະ ວິຊາການ ຂອງພະນັກງານ-ລັດຖະກອນ ດ້ວຍການໂຮມເອົາເງິນອຸດໜູນນ້ຳມັນບຸກຄົນ, ເງິນອຸດໜູນຄ່າໂທລະສັບ (ຕຳແໜ່ງປະເພດ 1, 2 ແລະ 3) ແລະ ຄ່າໃຊ້ຈ່າຍໃນການຊື້ປຶ້ມ, ບິກ, ສໍ, ໄມ້ບັນທັດ ແລະ ອື່ນໆ ທີ່ເປັນໃຊ້ສ່ວນບຸກຄົນ ທີ່ເຄີຍປະຕິບັດຢູ່ລາຍຈ່າຍບໍລິຫານຜ່ານມາ ລວມເຂົ້າເປັນເງິນອຸດໜູນດຽວ ເພື່ອເບີກຈ່າຍລວມສູນ ຢູ່ໃນໂຄງສ້າງເງິນເດືອນຂອງລັດຖະກອນ ທີ່ກຳນົດໃໝ່ ດັ່ງນີ້:
   1) ຕຳແໜ່ງບໍລິຫານ ປະເພດ 1 ຈຳນວນ 1,200,000 ກີບ/ຄົນ/ເດືອນ
   2) ຕຳແໜ່ງບໍລິຫານ ປະເພດ 2 ຈຳນວນ 1,000,000 ກີບ/ຄົນ/ເດືອນ

3) ຕຳແໜ່ງບໍລິຫານ ປະເພດ 3 ຈຳນວນ 850,000 ກີບ/ຄົນ/ເດືອນ
4) ຕຳແໜ່ງບໍລິຫານ ປະເພດ 4 ຈຳນວນ 550,000 ກີບ/ຄົນ/ເດືອນ
5) ຕຳແໜ່ງບໍລິຫານ ປະເພດ 5 ຈຳນວນ 450,000 ກີບ/ຄົນ/ເດືອນ
6) ຕຳແໜ່ງບໍລິຫານ ປະເພດ 6 ຈຳນວນ 400,000 ກີບ/ຄົນ/ເດືອນ
7) ຕຳແໜ່ງບໍລິຫານ ປະເພດ 7 ຈຳນວນ 350,000 ກີບ/ຄົນ/ເດືອນ
8) ຕຳແໜ່ງບໍລິຫານ ປະເພດ 8 ຈຳນວນ 300,000 ກີບ/ຄົນ/ເດືອນ
9) ວິຊາການ ຈຳນວນ 200,000 ກີບ/ຄົນ/ເດືອນ

ສຳລັບການປະຕິບັດເງິນອຸດໜູນຕຳແໜ່ງຂອງທະຫານ, ຕຳຫຼວດ ໃຫ້ສືບຕໍ່ປະຕິບັດຕາມ ອັດຕາເກົ່າທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຜ່ານມາ.

5. ປັບປຸງ ເງິນອຸດໜູນອາຍຸການ

ປະຕິບັດເງິນອຸດໜູນອາຍຸການໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ເສຍອົງຄະ, ບຳນານຄົນ ແລະ ສະມາຊິກຄອບຄົວ ຂອງທຸກໄລຍະປີການ, ລະອຽດ ດັ່ງນີ້:

1) ໄລຍະປີການ ແຕ່ 1 - 5 ປີ ຈາກ 2,500 ກີບ ເພີ່ມເປັນ 5,000 ກີບ/1 ປີການ
2) ໄລຍະປີການ ແຕ່ 6 - 15 ປີ ຈາກ 5,000 ກີບ ເພີ່ມເປັນ 10,000 ກີບ/1 ປີການ
3) ໄລຍະປີການ ແຕ່ 16 - 25 ປີ ຈາກ 7,500 ກີບ ເພີ່ມເປັນ 15,000 ກີບ/1 ປີການ
4) ໄລຍະປີການ ແຕ່ 26 ປີຂຶ້ນໄປ ຈາກ 10,000 ກີບ ເພີ່ມເປັນ 20,000 ກີບ/1 ປີການ

6. ປັບປຸງ ເງິນນະໂຍບາຍລູກ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ບຳນານຄົນ ຈາກ 37,240 ກີບ/ຄົນ/ເດືອນ ເພີ່ມເປັນ 100,000 ກີບ/ຄົນ/ເດືອນ;
7. ປັບປຸງ ການປະຕິບັດເງິນນະໂຍບາຍເມຍ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຈາກ 29,400 ກີບ/ຄົນ/ເດືອນ ເພີ່ມເປັນ 100,000 ກີບ/ຄົນ/ເດືອນ;
8. ປັບປຸງ ເງິນອຸດໜູນວິຊາຊີບຂອງ ທະຫານ, ຕຳຫຼວດ ຈາກ 15% ເພີ່ມຂຶ້ນເປັນ 30% ຂອງເງິນເດືອນພື້ນຖານຕາມຊັ້ນ;
9. ບັນດາເງິນອຸດໜູນ ແລະ ເງິນນະໂຍບາຍຕ່າງໆ ທີ່ບໍ່ໄດ້ປັບປຸງໃນຄຳແນະນຳສະບັບນີ້ ໃຫ້ສືບຕໍ່ຈັດຕັ້ງປະຕິບັດຕາມຄຳແນະນຳ ສະບັບເລກທີ 2924/ກງ, ລົງວັນທີ 19 ຕຸລາ 2012 ແລະ ນິຕິກຳອື່ນໆ ທີ່ໄດ້ຮັບຮອງ ແລະ ປະກາດໃຊ້ໄລຍະຜ່ານມາ;
10. ໃຫ້ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາທ່ານ ເຈົ້າແຂວງ, ຂະແໜງການເງິນ ແລະ ຂະແໜງການກ່ຽວຂ້ອງ ໃນທົ່ວປະເທດ ຈົ່ງຮັບຮູ້ ແລະ ເປັນເຈົ້າການ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ໃຫ້ສຳເລັດ ແລະ ມີປະສິດທິຜົນ; ໃນການຈັດຕັ້ງປະຕິບັດຕົວຈິງຖ້າເຫັນວ່າມີຂໍ້ຫຍຸ້ງຍາກ ຫຼື ບໍ່ສອດຄ່ອງ ໃຫ້ຮີບຮ້ອນລາຍງານມາຍັງກະຊວງການເງິນ;
11. ຄຳແນະນຳ ສະບັບນີ້ມີຜົນສັກສິດ ແລະ ເລີ່ມຈັດຕັ້ງປະຕິບັດ ແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງການເງິນ

ລັດຖະມົນຕີ

ສັນຕິພາບ ພົມວິຫານ